**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

**ກະຊວງສາທາລະນະສຸກ**

**ກົມອາຫານ ແລະ ຢາ**

# ຂໍ້ຕົກລົງ

## ວ່າດ້ວຍການຂຶ້ນທະບຽນອາຫານ
## (ສະບັບປັບປຸງ)

**ນະຄອນຫຼວງວຽງຈັນ**

**2023**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງສາທາລະນະສຸກ
ກົມອາຫານ ແລະ ຢາ

# ຂໍ້ຕົກລົງ
# ວ່າດ້ວຍການຂຶ້ນທະບຽນອາຫານ
# (ສະບັບປັບປຸງ)

**ນະຄອນຫຼວງວຽງຈັນ**

**2023**

# ສາລະບານ


**ໝວດທີ 1 ບົດບັນຍັດທົ່ວໄປ .................................................. 1**

ມາດຕາ 1 ຈຸດປະສົງ (ປັບປຸງ) .................................................. 1

ມາດຕາ 2 ການຂຶ້ນທະບຽນອາຫານ (ປັບປຸງ) .................................................. 1

ມາດຕາ 3 ອະທິບາຍຄໍາສັບ (ປັບປຸງ) .................................................. 1

ມາດຕາ 4 ຂອບເຂດການນໍາໃຊ້ (ປັບປຸງ) .................................................. 3

ມາດຕາ 5 ຫຼັກການກ່ຽວກັບການຂຶ້ນທະບຽນອາຫານ (ໃໝ່) .................................................. 3

**ໝວດທີ 2 ການຂຶ້ນທະບຽນອາຫານທີ່ຜະລິດພາຍໃນ ແລະ ນໍາເຂົ້າ .................................................. 3**

ມາດຕາ 6 ການຂຶ້ນທະບຽນອາຫານທີ່ຜະລິດພາຍໃນ (ໃໝ່) .................................................. 3

ມາດຕາ 7 ເງື່ອນໄຂການຂຶ້ນທະບຽນອາຫານພາຍໃນ ສໍາລັບໂຮງງານອຸດສາຫະກໍາ (ໃໝ່) .................................................. 3

ມາດຕາ 8 ເງື່ອນໄຂການຂຶ້ນທະບຽນອາຫານພາຍໃນ ສໍາລັບໂຮງງານຂະໜາດນ້ອຍແບບຄອບຄົວ (ໃໝ່) .................................................. 3

ມາດຕາ 9 ການປະກອບເອກະສານຂໍຂຶ້ນ ຫຼື ຕໍ່ທະບຽນອາຫານພາຍໃນສໍາລັບໂຮງງານອຸດສາຫະກໍາ (ປັບປຸງ) .................................................. 4

ມາດຕາ 10 ການປະກອບເອກະສານຂໍຂຶ້ນ ຫຼື ຕໍ່ທະບຽນອາຫານພາຍໃນ ສໍາລັບໂຮງງານຂະໜາດນ້ອຍແບບຄອບຄົວ (ໃໝ່) .................................................. 4

ມາດຕາ 11 ການຂຶ້ນທະບຽນອາຫານສົ່ງອອກ (ໃໝ່) .................................................. 5

ມາດຕາ 12 ການຂຶ້ນທະບຽນອາຫານນໍາເຂົ້າ (ໃໝ່) .................................................. 5

ມາດຕາ 13 ເງື່ອນໄຂການຂຶ້ນທະບຽນອາຫານນໍາເຂົ້າ (ໃໝ່) .................................................. 5

ມາດຕາ 14 ການປະກອບເອກະສານຂໍຂຶ້ນ ຫຼື ຕໍ່ທະບຽນອາຫານນໍາເຂົ້າ (ປັບປຸງ) .................................................. 5

ມາດຕາ 15 ສຸຂະພາບຂອງຜູ້ສໍາພັດກັບອາຫານ (ໃໝ່) .................................................. 6

ມາດຕາ 16 ລາຍການກວດສຸຂະພາບຂອງຜູ້ສໍາພັດກັບອາຫານ (ໃໝ່) .................................................. 6

**ໝວດທີ 3 ການພິຈາລະນາອອກອະນຸຍາດຂຶ້ນ ຫຼື ຕໍ່, ໂຈະ ແລະ ຖອນທະບຽນອາຫານ .................................................. 6**

ມາດຕາ 17 ການດໍາເນີນຂໍຂຶ້ນ ຫຼື ຕໍ່ທະບຽນອາຫານ (ປັບປຸງ) .................................................. 6

ມາດຕາ 18 ຂັ້ນຕອນການພິຈາລະນາຂຶ້ນ ຫຼື ຕໍ່ທະບຽນອາຫານພາຍໃນສໍາລັບໂຮງງານອຸດສາຫະກໍາ ແລະ ນໍາເຂົ້າ(ປັບປຸງ) .................................................. 6

ມາດຕາ 19 ຂັ້ນຕອນການພິຈາລະນາຂຶ້ນ ຫຼື ຕໍ່ທະບຽນອາຫານພາຍໃນສໍາລັບໂຮງງານຂະໜາດນ້ອຍ (ໃໝ່) .................................................. 7

ມາດຕາ 20 ອາຍຸຂອງໃບທະບຽນອາຫານ (ປັບປຸງ) .................................................. 7

ມາດຕາ 21 ການປ່ຽນແປງ ຫຼື ປັບປຸງສະຖານທີ່, ອາຄານ ແລະ ຂໍ້ມູນການຜະລິດອາຫານ (ໃໝ່) .................................................. 7

ມາດຕາ 22 ການໂຈະໃບທະບຽນອາຫານ (ປັບປຸງ) .................................................. 7

ມາດຕາ 23 ການຖອນໃບທະບຽນອາຫານ (ປັບປຸງ) .................................................. 8

**ໝວດທີ 4 ສະຫຼາກອາຫານ .................................................. 8**

ມາດຕາ 24 ສະຫຼາກອາຫານ (ປັບປຸງ) .................................................. 8

ມາດຕາ 25 ເລກທະບຽນອາຫານ (ໃໝ່) .................................................. 8

ມາດຕາ 26 ການກ່າວອ້າງອາຫານຄຸນນະພາບດີເລີດ (Premium) (ໃໝ່) .................................................. 9

**ໝວດທີ 5 ການວິໄຈອາຫານ, ຄ່າທໍານຽມ ແລະ ຄ່າບໍລິການ .................................................. 9**

ມາດຕາ 27 ການວິໄຈອາຫານເພື່ອຂຶ້ນ ຫຼື ຕໍ່ທະບຽນ (ໃໝ່) .................................................. 9

ມາດຕາ 28 ການວິໄຈອາຫານເພື່ອຕິດຕາມຄຸນນະພາບ (ໃໝ່) .................................................. 10

ມາດຕາ 29 ການເກັບຕົວຢ່າງ ແລະ ສົ່ງວິໄຈອາຫານ (ໃໝ່) .................................................. 10

ມາດຕາ 30 ລາຍການວິໄຈ (Parameters) (ໃໝ່) .................................................. 10

ມາດຕາ 31 ການພິຈາລະນາຜົນວິໄຈ (ໃໝ່) .................................................. 10

ມາດຕາ 32 ຄ່າທຳນຽມ ແລະ ຄ່າບໍລິການ (ປັບປຸງ)........ 10
**ໝວດທີ 6 ສິດ ແລະ ພັນທະຂອງຜູ້ຂຶ້ນທະບຽນອາຫານ........ 11**
ມາດຕາ 33 ສິດຂອງຜູ້ຂຶ້ນທະບຽນອາຫານ (ໃໝ່)........ 11
ມາດຕາ 34 ພັນທະຂອງຜູ້ຂຶ້ນທະບຽນອາຫານ (ໃໝ່)........ 11
**ໝວດທີ 7 ຂໍ້ຫ້າມ........ 11**
ມາດຕາ 35 ຂໍ້ຫ້າມສຳລັບຜູ້ປະກອບການດ້ານທຸລະກິດອາຫານ (ປັບປຸງ)........ 11
ມາດຕາ 36 ຂໍ້ຫ້າມສຳລັບເຈົ້າໜ້າທີ່ອາຫານ ແລະ ຢາ (ໃໝ່)........ 12
**ໝວດທີ 8 ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ........ 12**
ມາດຕາ 37 ນະໂຍບາຍຕໍ່ຜູ້ມີຜົນງານ........ 12
ມາດຕາ 38 ມາດຕະການຕໍ່ຜູ້ລະເມີດ (ປັບປຸງ)........ 12
ມາດຕາ 39 ມາດຕະການສຶກສາອົບຮົມ (ປັບປຸງ)........ 12
ມາດຕາ 40 ມາດຕະການປັບໃໝ (ປັບປຸງ)........ 13
ມາດຕາ 41 ມາດຕະການທາງແພ່ງ ແລະ ອາຍາ........ 13
**ໝວດທີ 9 ບົດບັນຍັດສຸດທ້າຍ........ 13**
ມາດຕາ 42 ການຈັດຕັ້ງປະຕິບັດ........ 13
ມາດຕາ 43 ຜົນສັກສິດ........ 13

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສາທາລະນະສຸກ

ເລກທີ 2749/ສທ
ນະຄອນຫຼວງວຽງຈັນ, ວັນທີ 28 AUG 2023

# ຂໍ້ຕົກລົງ
# ວ່າດ້ວຍການຂຶ້ນທະບຽນອາຫານ (ສະບັບປັບປຸງ)

- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງສາທາລະນະສຸກ ສະບັບເລກທີ 570/ນຍ, ລົງວັນທີ 16 ກັນຍາ 2021;
- ອີງຕາມ ກົດໝາຍ ວ່າດ້ວຍອາຫານ (ສະບັບປັບປຸງ) ເລກທີ 33/ສພຊ, ລົງວັນທີ 24 ກໍລະກົດ 2013;
- ອີງຕາມ ໜັງສືສະເໜີຂອງກົມອາຫານ ແລະ ຢາ ສະບັບເລກທີ 6856/ກອຢ, ລົງວັນທີ 10 ສິງຫາ 2023.

## ລັດຖະມົນຕີອອກຂໍ້ຕົກລົງ

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ (ປັບປຸງ)**

ຂໍ້ຕົກລົງສະບັບນີ້ກຳນົດຫຼັກການ, ລະບຽບການ, ວິທີການ ແລະ ມາດຕະການກ່ຽວກັບການຂຶ້ນທະບຽນອາຫານ ທີ່ຜະລິດພາຍໃນ, ສົ່ງອອກ ແລະ ນຳເຂົ້າ ເພື່ອຈຳໜ່າຍ ແລະ ຈໍລະຈອນ ໃນ ສປປ ລາວ, ຕ້ອງຮັບປະກັນຄຸນນະພາບ ແລະ ຄວາມປອດໄພຂອງອາຫານ ແນໃສ່ປົກປ້ອງສຸຂະພາບຂອງຜູ້ບໍລິໂພກ ແລະ ອຳນວຍຄວາມສະດວກທາງດ້ານການຄ້າ.

**ມາດຕາ 2 ການຂຶ້ນທະບຽນອາຫານ (ປັບປຸງ)**

ການຂຶ້ນທະບຽນອາຫານ ແມ່ນການແຈ້ງຊື່, ສູດຕຳລາ, ສ່ວນປະກອບ, ກຳມະວິທີການຜະລິດ, ຮູບແບບ, ນ້ຳໜັກ, ປະລິມານ, ຫົວໜ່ວຍບັນຈຸຫຸ້ມຫໍ່ ແລະ ສະຫຼາກ ຂອງອາຫານແຕ່ລະລາຍການຢ່າງຈະແຈ້ງເປັນລາຍລັກອັກສອນໂດຍຜູ້ດຳເນີນທຸລະກິດອາຫານ ລວມທັງການກວດກາສະຖານທີ່ປະກອບການ, ເກັບຕົວຢ່າງ, ວິໄຈຄຸນນະພາບ ແລະ ຄວາມປອດໄພຂອງອາຫານ ເພື່ອພິຈາລະນາອອກທະບຽນອາຫານ.

**ມາດຕາ 3 ອະທິບາຍຄຳສັບ (ປັບປຸງ)**

ຄຳສັບທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ມີຄວາມໝາຍດັ່ງນີ້:

1. **ອາຫານ** ໝາຍເຖິງ ວັດຖຸ ຫຼື ສານໃດໜຶ່ງ ຊຶ່ງຢູ່ໃນຮູບແບບສຳເລັດຮູບ, ເຄິ່ງສຳເລັດຮູບ ຫຼື ບໍ່ທັນໄດ້ປຸງແຕ່ງ ເຊັ່ນ: ອາຫານສົດ, ດິບ ເພື່ອການບໍລິໂພກຂອງຄົນ ລວມທັງເຄື່ອງດື່ມທີ່ມີທາດເຫຼົ້າ ແລະ ບໍ່ມີທາດເຫຼົ້າ, ນ້ຳດື່ມ, ນ້ຳກ້ອນ, ອາຫານເສີມ, ອາຫານທາງການແພດ, ຜະລິດຕະພັນອື່ນ ແລະ ສານໃດໜຶ່ງທີ່ນຳໃຊ້ໃນການຜະລິດ, ກະກຽມປຸງແຕ່ງ ເຊັ່ນ: ທາດເພີ່ມອາຫານ (Food additives), ທາດທີ່ໃຊ້ບຳບັດອາຫານ (Processing aids) ແຕ່ບໍ່ລວມເອົາເຄື່ອງສຳອາງ, ຢາສູບ ແລະ ຢາປົວພະຍາດ;

2. **ອາຫານເສີມ (Food supplement ຫຼື Dietary supplement)** ໝາຍເຖິງ ຜະລິດຕະພັນທີ່ໄດ້ມາຈາກອາຫານເປັນສ່ວນປະກອບຫຼັກ ແລະ ອຸດົມດ້ວຍສານອາຫານທີ່ມີປະລິມານເຂັ້ມຂຸ້ນ ຢູ່ໃນຮູບແບບ ເມັດ, ແຄບຊູນ, ຝຸ່ນ, ເກັດ, ຂອງແຫຼວ ແລະ ຮູບແບບອື່ນ ຊຶ່ງບໍ່ແມ່ນຮູບແບບອາຫານຕາມປົກກະຕິ ໃຊ້ເພື່ອສົ່ງເສີມສຸຂະພາບ;
3. **ອາຫານໃໝ່** ໝາຍເຖິງ ອາຫານຊະນິດໜຶ່ງທີ່ບໍ່ເຄີຍມີປະຫວັດໃນການບໍລິໂພກ ຫຼື ຖືກຜະລິດໂດຍວິທີການໃໝ່ທີ່ບໍ່ເຄີຍນໍາໃຊ້ໃນ ສປປ ລາວ ມາກ່ອນ;
4. **ອາຫານທີ່ມີຄວາມສ່ຽງສູງ** ໝາຍເຖິງ ອາຫານສໍາລັບກຸ່ມຜູ້ບໍລິໂພກທີ່ມີຄວາມສ່ຽງສູງ ເຊັ່ນ: ເດັກອ່ອນ, ເດັກນ້ອຍ, ຄົນເຈັບ ແລະ ຜູ້ເຖົ້າ ຫຼື ອາຫານພິເສດ ເຊັ່ນ: ອາຫານຮີມຄວັນ, ອາຫານຫຸ້ມຫໍ່ບໍ່ມີອາກາດ, ອາຫານກະປ໋ອງ, ອາຫານເດັກນ້ອຍ; ຂະບວນການໃດໜຶ່ງທີ່ຍືດອາຍຸອາຫານອອກ ແລະ ອາຫານພ້ອມກິນ, ອາຫານທີ່ເຮັດໃຫ້ແພ້ເຊັ່ນ: ຜະລິດຕະພັນນົມ, ກຸ້ງ, ຫອຍ, ໄຂ່ດິບໃນອາຫານ, ອາຫານສໍາລັບຄົນເຈັບ, ອາຫານທີ່ມີຄວາມຊຸ່ມສູງ ແລະ ມີທາດໂປຣຕີອິນສູງ ຊຶ່ງຕ້ອງມີລະບົບຄວບຄຸມອຸນຫະພູມ (ເອກະສານຊ້ອນທ້າຍ: ລາຍການຜະລິດຕະພັນອາຫານຕາມປະເພດຄວາມສ່ຽງ);
5. **ອາຫານທີ່ມີຄວາມສ່ຽງກາງ** ໝາຍເຖິງ ອາຫານທີ່ມາຈາກສະຖານທີ່ປຸງແຕ່ງ, ຮ້ານອາຫານທີ່ມີຫຼາຍລາຍການອາຫານ, ການຈັດການວັດຖຸດິບ, ການກະກຽມທີ່ຊັບຊ້ອນ ລວມທັງ ການຫຸງຕົ້ມ, ແຊ່ເຢັນ, ການອຸ່ນຊົ່ວຄາວເຊິ່ງມີອາຫານທີ່ເປັນອັນຕະລາຍຕ່າງໆ ເຊັ່ນ: ອາຫານພ້ອມກິນ ຫຼື ເຮັດໃຫ້ຮ້ອນ ແລະ ເສີບທັນທີ; ຕົວຢ່າງ: ຊີ້ນແລະ ໄກ່ດິບ ທີ່ຈະຕ້ອງເຮັດໃຫ້ສຸກກ່ອນການບໍລິໂພກ, ຜະລິດຕະພັນປາແຊ່ແຂງ, ຜະລິດຕະພັນອາຫານທີ່ມີກົດຕໍ່າ, ນໍ້າໝາກໄມ້ ແລະ ອື່ນໆ, ເຊິ່ງມີປະຫວັດການຄວບຄຸມກວດກາບັນດາປັດໄຈຄວາມສ່ຽງຂອງພະຍາດທີ່ເກີດຈາກອາຫານ;
6. **ອາຫານທີ່ມີຄວາມສ່ຽງຕໍ່າ** ໝາຍເຖິງ ອາຫານທີ່ວາງຂາຍໃນຮ້ານຂາຍຍ່ອຍ, ອາຫານຫຸ້ມຫໍ່, ອາຫານທີ່ບໍ່ໄດ້ໃຫ້ກຸ່ມຄົນອ່ອນແອບໍລິໂພກ, ຮ້ານອາຫານຈານດ່ວນ, ຮ້ານອາຫານທີ່ມີລາຍການອາຫານໜ້ອຍ, ການກະກຽມ,ການແຕ່ງກິນ ແລະ ບໍລິການທັນທີ, ບໍ່ມີການແຊ່ເຢັນ, ການຮັກສາຮ້ອນໃນເວລາສັ້ນ, ລວມທັງອາຫານປຸງແຕ່ງ,ວັດຖຸດິບທີ່ຮັກສາສໍາລັບການປຸງແຕ່ງ, ອາຫານແຫ້ງຫຸ້ມຫໍ່ ຫຼື ອາຫານສໍາເລັດຮູບ ແລະ ອາຫານທີ່ມີປະຫວັດວ່າ ເປັນອາຫານທີ່ມີຄວາມສ່ຽງຕໍ່າ ແລະ ສາມາດຄວບຄຸມ ໃນບັນດາຂັ້ນຕອນການຜະລິດ. ຕົວຢ່າງອາຫານຄວາມສ່ຽງຕໍ່າມີ: ອາຫານຫຸ້ມຫໍ່ປະເພດແຫ້ງ, ອາຫານປະເພດເຂົ້າສາລີແຫ້ງ, ຖົ່ວແຫ້ງ, ຜະລິດຕະພັນນໍ້າຕານ,ນໍ້າມັນ, ໄຂມັນ, ອາຫານດອງ, ກວນໝາກໄມ້, ວຸ້ນ ແລະ ຜະລິດຕະພັນແຊ່ເຄັມແຫ້ງ, ປະເພດຖົ່ວຍົກເວັ້ນຖົ່ວດິນ (ທີ່ມີອາຟລາຕົກຊິນ).
7. **ອາຫານທາງດ້ານການແພດ (medical food)** ໝາຍເຖິງໝວດອາຫານທີ່ໃຊ້ສະເພາະທາງດ້ານການແພດ ຊຶ່ງຜ່ານການຜະລິດດ້ວຍວິທີ ຫຼື ສູດຕໍາລາສະເພາະສໍາລັບຄົນເຈັບ ແລະ ຖືກນໍາໃຊ້ພາຍໃຕ້ການແນະນໍາຂອງແພດເທົ່ານັ້ນ, ຊຶ່ງມີຈຸດປະສົງໃຫ້ອາຫານພຽງຢ່າງດຽວ ຫຼື ສ່ວນໃດສ່ວນໜຶ່ງ ໂດຍອີງຕາມສະພາບຂອງຄົນເຈັບໃນການຮັບອາຫານ, ການຍ່ອຍ, ການດູດຊຶມ, ເຜົາຜານ ຫຼື ບັນຈຸທາດບາງທາດບໍາລຸງລ້ຽງ, ຫຼື ຜູ້ທີ່ຕ້ອງການທາດບໍາລຸງລ້ຽງສະເພາະທີ່ກໍານົດໂດຍແພດ ຊຶ່ງບໍ່ສາມາດບັນລຸທາດບໍາລຸງລ້ຽງໄດ້ໂດຍການກິນອາຫານຕາມປົກກະຕິ;
8. **ວັດຖຸທີ່ໃຊ້ກັບອາຫານ (food grade):** ໝາຍເຖິງ ວັດຖຸ ຫຼື ສານທີ່ໃຊ້ໃນຂະບວນການຜະລິດ, ປຸງແຕ່ງ, ບັນຈຸ, ມັດຫໍ່ ແລະ ເກັບຮັກສາອາຫານ ທີ່ບໍ່ໃຫ້ເກີດປົນເປື້ອນ, ພິດເບື່ອ ແລະ ມີຄວາມປອດໄພສໍາລັບຜູ້ບໍລິໂພກ;
9. **ການຮັບຜະລິດອາຫານ:** ໝາຍເຖິງ ການຮັບຈ້າງຜະລິດອາຫານຂອງໂຮງງານ ຫລື ບໍລິສັດ ທີ່ໄດ້ຮັບອະນຸຍາດດໍາເນີນກິດຈະການ ໃຫ້ແກ່ຜູ້ວ່າຈ້າງຜະລິດອາຫານ;
10. **ໂຮງງານອຸດສາຫະກໍາອາຫານ:** ໝາຍເຖິງ ໂຮງງານທີ່ມີກໍາລັງແຮງຂອງເຄື່ອງຈັກ 10 ແຮງມ້າ ຫຼື ຈໍານວນແຮງງານ 10 ຄົນຂຶ້ນໄປ, ປະກອບມີສາມຂະໜາດຄື: ໂຮງງານຂະໜາດນ້ອຍ ແມ່ນມີກໍາລັງແຮງຂອງເຄື່ອງຈັກ 10 ຫາ 50 ແຮງມ້າ ຫຼື ຈໍານວນແຮງງານ 10 ຫາ 50 ຄົນ, ໂຮງງານຂະໜາດກາງແມ່ນມີ

ກຳລັງແຮງຂອງເຄື່ອງຈັກ 51 ຫາ 200 ແຮງມ້າ ຫຼື ຈຳນວນແຮງງານ 51 ຫາ 200 ຄົນ, ໂຮງງານຂະໜາດໃຫຍ່ ແມ່ນມີກຳລັງແຮງຂອງເຄື່ອງຈັກ 201 ແຮງມ້າ ຫຼື ຈຳນວນແຮງງານ 201 ຄົນຂຶ້ນໄປ;

11. **ໂຮງງານຂະໜາດນ້ອຍແບບຄອບຄົວ:** ໝາຍເຖິງ ສະຖານທີ່, ອາຄານໂຮງງານ ແລະ ນຳໃຊ້ເຄື່ອງຈັກ, ເຄື່ອງມືອຸປະກອນ ທີ່ມີກຳລັງແຮງຂອງເຄື່ອງຈັກຕ່ຳກ່ວາ 10 ແຮງມ້າ ຫລື ນຳໃຊ້ແຮງງານຄົນຕ່ຳກວ່າ 10 ຄົນລົງມາ.

**ມາດຕາ 4 ຂອບເຂດການນຳໃຊ້ (ປັບປຸງ)**

ຂໍ້ຕົກລົງສະບັບນີ້ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດ ທີ່ດຳເນີນທຸລະກິດຜະລິດ, ສົ່ງອອກ ແລະ ນຳເຂົ້າ ອາຫານ ຢູ່ພາຍໃນ ສປປ ລາວ.

**ມາດຕາ 5 ຫຼັກການກ່ຽວກັບການຂຶ້ນທະບຽນອາຫານ (ໃໝ່)**

ການຂຶ້ນທະບຽນອາຫານຕ້ອງປະຕິບັດຕາມຫຼັກການດັ່ງນີ້:

1. ຮັບປະກັນການຜະລິດ, ສົ່ງອອກ ແລະ ນຳເຂົ້າອາຫານ ໃຫ້ມີຄຸນນະພາບ ແລະ ຄວາມປອດໄພ ຕໍ່ຜູ້ບໍລິໂພກ, ສອດຄ່ອງ ຕາມລະບຽບກົດໝາຍຂອງ ສປປ ລາວ, ມາດຕະຖານພາກພື້ນ ແລະ ສາກົນ;
2. ຮັບປະກັນການອຳນວຍຄວາມສະດວກໃຫ້ແກ່ການດຳເນີນທຸລະກິດອາຫານຕາມຫຼັກການບົນພື້ນຖານຄວາມສ່ຽງ;
3. ຮັບປະກັນການປະຕິບັດຢ່າງຖືກຕ້ອງຕາມລະບຽບຫຼັກການ, ໂປ່ງໃສ, ຍຸດຕິທຳ ແລະ ສາມາດກວດກາໄດ້.

## ໝວດທີ 2
## ການຂຶ້ນທະບຽນອາຫານທີ່ຜະລິດພາຍໃນ ແລະ ນຳເຂົ້າ

**ມາດຕາ 6 ການຂຶ້ນທະບຽນອາຫານທີ່ຜະລິດພາຍໃນ (ໃໝ່)**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງດຳເນີນທຸລະກິດອາຫານ ກ່ຽວກັບການຜະລິດ, ປຸງແຕ່ງ, ແບ່ງບັນຈຸ ແລະ ຫຸ້ມຫໍ່ ລວມທັງການຮັບຜະລິດອາຫານ ຕ້ອງໄດ້ຂຶ້ນທະບຽນດັ່ງນີ້:

1. ຜະລິດຕະພັນອາຫານທີ່ຜະລິດຈາກໂຮງງານອຸດສາຫະກຳ ແມ່ນຂຶ້ນທະບຽນອາຫານນຳກົມອາຫານ ແລະ ຢາ;
2. ຜະລິດຕະພັນອາຫານທີ່ຜະລິດຈາກໂຮງງານຂະໜາດນ້ອຍແບບຄອບຄົວ ແມ່ນຂຶ້ນທະບຽນອາຫານນຳພະແນກສາທາລະນະສຸກແຂວງ, ນະຄອນຫຼວງ.

**ມາດຕາ 7 ເງື່ອນໄຂການຂຶ້ນທະບຽນອາຫານພາຍໃນ ສຳລັບໂຮງງານອຸດສາຫະກຳ (ໃໝ່)**

ເງື່ອນໄຂການຂຶ້ນທະບຽນອາຫານພາຍໃນ ສຳລັບໂຮງງານອຸດສາຫະກຳ ມີດັ່ງນີ້:

1. ມີສະຖານທີ່ດຳເນີນທຸລະກິດອາຫານ ຫຼື ສະຖານທີ່ຜະລິດ, ປຸງແຕ່ງ, ແບ່ງບັນຈຸຫຸ້ມຫໍ່, ໂຮງງານຜະລິດອາຫານທີ່ໄດ້ປະຕິບັດຕາມຫຼັກການສຸຂະອະນາໄມອາຫານທີ່ດີ ຫຼື ການຜະລິດອາຫານທີ່ດີ ແລະ ໄດ້ຮັບອະນຸຍາດດຳເນີນທຸລະກິດອາຫານຖືກຕ້ອງຕາມກົດໝາຍ;
2. ມີສິ່ງອຳນວຍຄວາມສະດວກທີ່ຈຳເປັນ ເພື່ອຮັບປະກັນຄຸນນະພາບ ແລະ ຄວາມປອດໄພຂອງທຸກຂັ້ນຕອນການຜະລິດ;
3. ມີວິຊາການທີ່ມີຄວາມຮູ້ພື້ນຖານທາງດ້ານວິທະຍາສາດ ແລະ ເຕັກໂນໂລຊີອາຫານ ຫຼື ຜ່ານການຝຶກອົບຮົມ ດ້ານຄວາມປອດໄພອາຫານ ຢູ່ພາຍໃນ ຫຼື ຕ່າງປະເທດ ທີ່ມີການຢັ້ງຢືນ.

**ມາດຕາ 8 ເງື່ອນໄຂການຂຶ້ນທະບຽນອາຫານພາຍໃນ ສຳລັບໂຮງງານຂະໜາດນ້ອຍແບບຄອບຄົວ (ໃໝ່)**

ເງື່ອນໄຂການຂຶ້ນທະບຽນອາຫານພາຍໃນ ສຳລັບໂຮງງານຂະໜາດນ້ອຍແບບຄອບຄົວມີດັ່ງນີ້:

1. ຕ້ອງມີສະຖານທີ່ຜະລິດສະເພາະ, ແຍກເປັນສັດສ່ວນຕາມສາຍໄຍການຜະລິດ. ໃນກໍລະນີທີ່ບໍ່ມີສະຖານທີ່ສະເພາະ ຕ້ອງມີຫ້ອງຜະລິດທີ່ແຍກຈາກທີ່ພັກອາໃສ
2. ມີສິ່ງອໍານວຍຄວາມສະດວກທີ່ຈໍາເປັນ ເພື່ອຮັບປະກັນຄຸນນະພາບ ແລະ ຄວາມປອດໄພຂອງທຸກຂັ້ນຕອນການຜະລິດ;
3. ປະຕິບັດຕາມຫຼັກການພື້ນຖານສຸຂະນາໄມອາຫານທີ່ດີ ຕາມກະຊວງສາທາລະນະສຸກກໍານົດ;
4. ຜູ້ຜະລິດຕ້ອງໄດ້ຜ່ານການຝຶກອົບຮົມດ້ານຄວາມປອດໄພອາຫານ ຢູ່ພາຍໃນ ຫຼື ຕ່າງປະເທດ ທີ່ມີການຢັ້ງຢືນ.

**ມາດຕາ 9 ການປະກອບເອກະສານຂໍຂຶ້ນ ຫຼື ຕໍ່ທະບຽນອາຫານພາຍໃນສໍາລັບໂຮງງານອຸດສາຫະກໍາ (ປັບປຸງ)**

ເອກະສານປະກອບ ເພື່ອຂໍຂຶ້ນທະບຽນອາຫານພາຍໃນ ສໍາລັບໂຮງງານອຸດສາຫະກໍາມີ ດັ່ງນີ້:

1. ໃບຄໍາຮ້ອງຂໍຂຶ້ນທະບຽນອາຫານ ຕາມແບບຟອມ ກົມອາຫານ ແລະ ຢາ (1 ສະບັບ);
2. ກໍາມະວິທີໃນການຜະລິດປຸງແຕ່ງ (1 ສະບັບ);
3. ສະຫຼາກອາຫານ (1 ສະບັບ);
4. ແຜນວາດ ທີ່ຕັ້ງໂຮງງານ (1 ສະບັບ);
5. ແຜນວາດອາຄານພາຍໃນໂຮງງານ ແລະ ການຕິດຕັ້ງເຄື່ອງຈັກອຸປະກອນ (1 ສະບັບ);
6. ແຜນວາດສາຍໄຍການຜະລິດ ພ້ອມຮູບພາບປະກອບຂອງໂຮງງານ (1 ສະບັບ);
7. ໃບຢັ້ງຢືນຜົນການວິໄຈອາຫານຈາກສູນວິໄຈອາຫານ ແລະ ຢາແຫ່ງຊາດ ຫຼື ຫ້ອງວິໄຈອື່ນທີ່ກະຊວງສາທາລະນະສຸກຮັບຮູ້ (1 ສະບັບ);
8. ຕົວຢ່າງອາຫານທີ່ຢູ່ໃນຫໍ່ຫຸ້ມຫໍ່ມັດຫໍ່ເດີມ (ຊະນິດລະ 1 ຕົວຢ່າງ);
9. ໃບຢັ້ງຢືນສຸຂະພາບຂອງຜູ້ຜະລິດອາຫານ ມີອາຍຸການນໍາໃຊ້ 01 ປີ (1 ສະບັບ);
10. ໃບຢັ້ງຢືນຜະລິດອາຫານທີ່ດີ (GMP) ຫຼື ສຸຂະອະນາໄມອາຫານທີ່ດີ (GHP) (ຖ້າມີ) (1 ສະບັບ);
11. ໃບທະບຽນວິສາຫະກິດ ຫຼື ໃບຢັ້ງຢືນດໍາເນີນກິດຈະການໂຮງງານ (1 ສະບັບ);
12. ໃບຢັ້ງຢືນການຝຶກອົບຮົມ ຫຼື ໃບປະກາສະນີຍະບັດດ້ານວິທະຍາສາດ, ເຕັກໂນໂລຊີ ແລະ ຄວາມປອດໄພອາຫານ (1 ສະບັບ);
13. ບົດບັນທຶກການລົງກວດກາສະຖານທີ່ຜະລິດຂອງເຈົ້າໜ້າທີ່ກວດກາອາຫານ ແລະ ຢາ (1 ສະບັບ).

ເອກະສານປະກອບ ເພື່ອຂໍຕໍ່ທະບຽນອາຫານພາຍໃນມີ ຂໍ້ 1, 3, 6, 7, 9, ແລະ 13 ຂອງມາດຕາ 9 ແລະ ສໍາເນົາໃບຢັ້ງຢືນການຂຶ້ນທະບຽນອາຫານ ສະບັບເກົ່າ 1 ສະບັບ. ສໍາລັບເອກະສານອື່ນທີ່ບໍ່ໄດ້ຮຽກຮ້ອງ ຜູ້ປະກອບການຕ້ອງເກັບສໍາເນົາໄວ້.

ກໍລະນີມີການປັບປຸງຕໍ່ເຕີມໂຮງງານແມ່ນໃຫ້ປະກອບເອກະສານຂໍ້ 2 ແລະ 5 ເພີ້ມໃໝ່.

**ມາດຕາ 10 ການປະກອບເອກະສານຂໍຂຶ້ນ ຫຼື ຕໍ່ທະບຽນອາຫານພາຍໃນ ສໍາລັບໂຮງງານຂະໜາດນ້ອຍແບບຄອບຄົວ (ໃໝ່)**

ເອກະສານປະກອບ ເພື່ອຂໍຂຶ້ນທະບຽນອາຫານພາຍໃນ ສໍາລັບໂຮງງານຂະໜາດນ້ອຍແບບຄອບຄົວມີດັ່ງນີ້:

1. ໃບຄໍາຮ້ອງຂໍຂຶ້ນທະບຽນອາຫານ (1 ສະບັບ);
2. ກໍາມະວິທີໃນການຜະລິດປຸງແຕ່ງ (1 ສະບັບ);
3. ສະຫຼາກອາຫານ (ຖ້າມີ) (1 ສະບັບ);
4. ໃບຢັ້ງຢືນຜົນການວິໄຈອາຫານຈາກສູນວິໄຈອາຫານ ແລະ ຢາແຫ່ງຊາດ ຫຼື ຫ້ອງວິໄຈອື່ນທີ່ກະຊວງສາທາລະນະສຸກຮັບຮູ້ (1 ສະບັບ);
5. ຕົວຢ່າງອາຫານທີ່ຢູ່ໃນຫໍ່ຫຸ້ມຫໍ່ມັດຫໍ່ເດີມ (ຊະນິດລະ 1 ຕົວຢ່າງ);

6. ໃບຢັ້ງຢືນສຸຂະພາບຂອງຜູ້ຜະລິດອາຫານ ມີອາຍຸການນໍາໃຊ້ 01 ປີ (1 ສະບັບ);
7. ບົດບັນທຶກການລົງກວດກາສະຖານທີ່ຜະລິດຂອງເຈົ້າໜ້າທີ່ກວດກາອາຫານ ແລະ ຢາ (1 ສະບັບ);
8. ໃບທະບຽນວິສາຫະກິດ (1 ສະບັບ);
9. ໃບຢັ້ງຢືນການຝຶກອົບຮົມ ຫຼື ໃບປະກາສະນີຍະບັດດ້ານວິທະຍາສາດ, ເຕັກໂນໂລຊີ ແລະ ຄວາມປອດໄພອາຫານ (1 ສະບັບ).

ເອກະສານປະກອບ ເພື່ອຂໍຕໍ່ທະບຽນອາຫານພາຍໃນ ສໍາລັບໂຮງງານຂະໜາດນ້ອຍ ແບບຄອບຄົວ ມີ ຂໍ້ 1, 3, 4, 6, 7 ຂອງມາດຕາ **10** ແລະ ສໍາເນົາໃບທະບຽນຜະລິດຕະພັນອາຫານພາຍໃນສະບັບເກົ່າ 1 ສະບັບ. ສໍາລັບເອກະສານອື່ນທີ່ບໍ່ໄດ້ຮຽກຮ້ອງ ຜູ້ປະກອບການຕ້ອງເກັບສໍາເນົາໄວ້.

**ມາດຕາ 11 ການຂຶ້ນທະບຽນອາຫານສົ່ງອອກ (ໃໝ່)**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງດໍາເນີນທຸລະກິດການສົ່ງອອກອາຫານ ຄວນນໍາເອົາຜະລິດຕະພັນມາຂຶ້ນທະບຽນກ່ອນການສົ່ງອອກ ໂດຍປະຕິບັດຕາມມາດຕາ 6, 7 ແລະ 9.

**ມາດຕາ 12 ການຂຶ້ນທະບຽນອາຫານນໍາເຂົ້າ (ໃໝ່)**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງດໍາເນີນທຸລະກິດການນໍາເຂົ້າອາຫານ ຫຼື ທາດເພີ່ມອາຫານ ຕ້ອງໄດ້ຂຶ້ນທະບຽນນໍາກົມອາຫານ ແລະ ຢາ, ຫຼື ນໍາພະແນກສາທາລະນະສຸກແຂວງ, ນະຄອນຫຼວງ ຕາມການມອບໝາຍ.

**ມາດຕາ 13 ເງື່ອນໄຂການຂຶ້ນທະບຽນອາຫານນໍາເຂົ້າ (ໃໝ່)**

ເງື່ອນໄຂການຂຶ້ນທະບຽນອາຫານນໍາເຂົ້າມີ ດັ່ງນີ້:

1. ເປັນບໍລິສັດຂາອອກ-ຂາເຂົ້າ ດ້ານອາຫານ ຫຼື ຢາ ໃນກໍລະນີນໍາເຂົ້າອາຫານເສີມ, ຕັ້ງຢູ່ໃນ ສປປ ລາວ ທີ່ໄດ້ຮັບອະນຸຍາດດໍາເນີນທຸລະກິດອາຫານຖືກຕ້ອງຕາມກົດໝາຍ;
2. ມີສະຖານທີ່, ສາງເກັບຮັກສາ, ຫ້ອງເຢັນສໍາລັບອາຫານທີ່ຕ້ອງຮັກສາຢູ່ໃນຄວາມເຢັນ, ມີລະບົບການຄວບຄຸມ ສັດ-ແມງໄມ້, ການກໍາຈັດສິ່ງເປິເປື້ອນ, ການຈັດເກັບອາຫານ, ການຮຽກຄືນຜະລິດຕະພັນ, ອຸປະກອນເຄື່ອງມື ແລະ ພາຫະນະຂົນສົ່ງໃນການຈໍລະຈອນແຈກຢາຍອາຫານ ທີ່ເໝາະສົມ ແລະ ພຽງພໍ;
3. ມີວິຊາການທີ່ມີໃບຢັ້ງຢືນການຝຶກອົບຮົມ ຫຼື ໃບປະກາສະນີຍະບັດດ້ານວິທະຍາສາດ, ເຕັກໂນໂລຊີ ແລະ ຄວາມປອດໄພອາຫານ.

**ມາດຕາ 14 ການປະກອບເອກະສານຂໍຂຶ້ນ ຫຼື ຕໍ່ທະບຽນອາຫານນໍາເຂົ້າ (ປັບປຸງ)**

ເອກະສານ ປະກອບຂໍຂຶ້ນທະບຽນອາຫານນໍາເຂົ້າປະກອບມີ ດັ່ງນີ້:

1. ໃບຄໍາຮ້ອງຂໍຂຶ້ນທະບຽນອາຫານນໍາເຂົ້າ (1 ສະບັບ);
2. ໃບຢັ້ງຢືນຜົນການວິໄຈທາງດ້ານຄວາມປອດໄພອາຫານ ຈາກອົງການຄຸ້ມຄອງຄວາມປອດໄພອາຫານຂອງປະເທດສົ່ງອອກ ຫຼື ຫ້ອງວິໄຈອື່ນທີ່ກະຊວງສາທາລະນະສຸກຮັບຮູ້ເປັນພາສາອັງກິດ (1 ສະບັບ);
3. ໃບຢັ້ງຢືນການຈົດທະບຽນ ຫຼື ໃບອະນຸຍາດຈໍາໜ່າຍອາຫານ ຈາກອົງການຄຸ້ມຄອງຄວາມປອດໄພອາຫານຂອງປະເທດສົ່ງອອກ ເປັນພາສາລາວ ຫຼື ພາສາອັງກິດ (1 ສະບັບ);
4. ໃບຢັ້ງຢືນການຜະລິດອາຫານທີ່ດີຈາກປະເທດສົ່ງອອກ (Certificate of GMP/GHP ຫຼື HACCP ຫຼື ISO 22000); (1 ສະບັບ);
5. ສະຫຼາກ ຫຼື ສະຕິກເກີ ຂອງອາຫານທີ່ເປັນພາສາລາວ (1 ສະບັບ);
6. ໃບຢັ້ງຢືນສ່ວນປະກອບຂອງຜະລິດຕະພັນ (1 ສະບັບ);
7. ໃບມອບສິດຈາກບໍລິສັດແມ່ ຫຼື ຜູ້ຜະລິດ (1 ສະບັບ);

8. ໃບທະບຽນວິສາຫະກິດ (1 ສະບັບ);
9. ບົດບັນທຶກການລົງກວດກາສະຖານທີ່ຜະລິດຂອງເຈົ້າໜ້າທີ່ກວດກາອາຫານ ແລະ ຢາ (1 ສະບັບ);
10. ຕົວຢ່າງອາຫານ (ຊະນິດລະ 1 ຕົວຢ່າງ);

ເອກະສານປະກອບເພື່ອຂໍຕໍ່ທະບຽນອາຫານນຳເຂົ້າມີ ຂໍ້ 1, 2, 3, 4, 5, 7, ແລະ 9 ຂອງມາດຕາ 14 ແລະ ສຳເນົາໃບຢັ້ງຢືນການຂຶ້ນທະບຽນອາຫານນຳເຂົ້າສະບັບເກົ່າ 1 ສະບັບ. ສຳລັບເອກະສານອື່ນທີ່ບໍ່ໄດ້ຮຽກຮ້ອງ ຜູ້ປະກອບການຕ້ອງເກັບສຳເນົາໄວ້.

**ມາດຕາ 15 ສຸຂະພາບຂອງຜູ້ສຳພັດກັບອາຫານ (ໃໝ່)**

ຜູ້ທີ່ສຳຜັດກັບອາຫານອາຫານ ຕ້ອງມີສຸຂະພາບສົມບູນ ແຂງແຮງດີ, ບໍ່ເປັນພະຍາດຕິດແປດ ຫຼື ເປັນພາຫະນຳເຊື້ອພະຍາດ ແລະ ຕ້ອງໄດ້ກວດສຸຂະພາບຂອງພະນັກງານກ່ອນຮັບເຂົ້າເຮັດວຽກໃໝ່ ແລະ ປະຈຳປີຢ່າງນ້ອຍ 1 ຄັ້ງຕໍ່ປີ ແລະ ບໍ່ໃຫ້ຜູ້ເຈັບປ່ວຍ ຫຼື ສົງໃສວ່າເປັນພາຫະນຳເຊື້ອພະຍາດ ເຮັດວຽກໃນບໍລິເວນຜະລິດອາຫານ ເມື່ອມີການເຈັບເປັນຕ້ອງໄດ້ແຈ້ງໃຫ້ຜູ້ບໍລິຫານຮັບຮູ້ ແລະ ໄປປິ່ນປົວຈົນກວ່າຫາຍດີເປັນປົກກະຕິ ຈຶ່ງເຂົ້າມາສືບຕໍ່ເຮັດວຽກໄດ້.

**ມາດຕາ 16 ລາຍການກວດສຸຂະພາບຂອງຜູ້ສຳພັດກັບອາຫານ (ໃໝ່)**

ຜູ້ສຳພັດກັບອາຫານ ຕ້ອງກວດສຸຂະພາບ ດັ່ງນີ້:

1. ພະຍາດຕັບ ຊະນິດ ເອ ແລະ ຊີ;
2. ພະຍາດອັກເສບປອດ, ວັນນະໂລກປອດ;
3. ພະຍາດໄຂ້ທໍລະພິດ;
4. ພະຍາດຜິວໜັງ ເຊັ່ນ: ກາກ, ກ້ຽນ, ຂີ້ທືດ, ຂີ້ເຮື້ອນ ແລະ ພະຍາດຫູວງ (ຂີ້ທູດ);

ການກວດສຸຂະພາບສາມາດກວດໄດ້ທີ່ໂຮງໝໍສູນກາງ, ໂຮງໝໍແຂວງ, ໂຮງໝໍເມືອງ ຫຼື ໂຮງໝໍເອກະຊົນທີ່ໄດ້ຮັບອະນຸຍາດຈາກກະຊວງສາທາລະນະສຸກ.

## ໝວດທີ 3
## ການພິຈາລະນາອອກອະນຸຍາດຂຶ້ນ ຫຼື ຕໍ່,ໂຈະ ແລະ ຖອນທະບຽນອາຫານ

**ມາດຕາ 17 ການດຳເນີນຂໍຂຶ້ນ ຫຼື ຕໍ່ທະບຽນອາຫານ (ປັບປຸງ)**

ການດຳເນີນຂໍຂຶ້ນ ຫຼື ຕໍ່ທະບຽນອາຫານ ແມ່ນພາຍຫຼັງທີ່ຜູ້ປະກອບການທຸລະກິດອາຫານພາຍໃນສຳລັບໂຮງງານອຸດສາຫະກຳ ແລະ ນຳເຂົ້າ ປະກອບເອກະສານ ຕາມມາດຕາ 9 ແລະ 14 ແລ້ວຍື່ນຄຳຮ້ອງຂໍຂຶ້ນ ຫຼື ຕໍ່ທະບຽນອາຫານ ຢູ່ຂະແໜງອາຫານ ແລະ ຢາ, ພະແນກສາທາລະນະສຸກແຂວງ, ນະຄອນຫຼວງ ເພື່ອກວດກາຄວາມຖືກຕ້ອງຂອງເອກະສານ ແລະ ກວດສະຖານທີ່ດຳເນີນທຸລະກິດອາຫານ ພາຍໃນ 20 ວັນລັດຖະການ ແລ້ວນຳສົ່ງໃຫ້ກົມອາຫານ ແລະ ຢາ ພິຈາລະນາອອກໃບທະບຽນ.

ການປະກອບເອກະສານຂໍຂຶ້ນ ຫຼື ຕໍ່ທະບຽນອາຫານພາຍໃນ ສຳລັບໂຮງງານຂະໜາດນ້ອຍແບບຄອບຄົວ ຜູ້ປະກອບການທຸລະກິດອາຫານ ປະກອບເອກະສານ ຕາມມາດຕາ 10 ແລ້ວຍື່ນຄຳຮ້ອງ ຢູ່ຫ້ອງການສາທາລະນະສຸກເມືອງ, ນະຄອນ ເພື່ອກວດກາຄວາມຖືກຕ້ອງຂອງເອກະສານ ແລະ ກວດສະຖານທີ່ດຳເນີນທຸລະກິດອາຫານ ພາຍໃນ 15 ວັນລັດຖະການ ນຳສົ່ງໃຫ້ຂະແໜງອາຫານ ແລະ ຢາ, ພະແນກສາທາລະນະສຸກແຂວງ, ນະຄອນຫຼວງ ພິຈາລະນາອອກໃບທະບຽນ.

**ມາດຕາ 18 ຂັ້ນຕອນການພິຈາລະນາຂຶ້ນ ຫຼື ຕໍ່ທະບຽນອາຫານພາຍໃນສຳລັບໂຮງງານອຸດສາຫະກຳ ແລະ ນຳເຂົ້າ (ປັບປຸງ)**

ກົມອາຫານ ແລະ ຢາ ພິຈາລະນາການອອກທະບຽນອາຫານ ພາຍໃນ 45 ວັນລັດຖະການ ເມື່ອເອກະສານຖືກຕ້ອງຄົບຖ້ວນ, ຖ້າເອກະສານບໍ່ຖືກຕ້ອງຄົບຖ້ວນ ຕ້ອງໄດ້ແຈ້ງຄືນຂະແໜງອາຫານ ແລະ

ຢາແຂວງ, ນະຄອນຫຼວງ ແລະ ຜູ້ປະກອບການ ພາຍໃນ 10 ວັນລັດຖະການ ເພື່ອປັບປຸງແກ້ໄຂ ແລະ ສົ່ງກັບຄືນ ພາຍໃນ 30 ວັນລັດຖະການ.

**ມາດຕາ 19 ຂັ້ນຕອນການພິຈາລະນາຂຶ້ນ ຫຼື ຕໍ່ທະບຽນອາຫານພາຍໃນສຳລັບໂຮງງານຂະໜາດນ້ອຍ (ໃໝ່)**

ຂະແໜງອາຫານ ແລະ ຢາ, ພະແນກສາທາລະນະສຸກແຂວງ, ນະຄອນຫຼວງ ພິຈາລະນາການອອກທະບຽນອາຫານ ພາຍໃນ 30 ວັນລັດຖະການເມື່ອເອກະສານຖືກຕ້ອງຄົບຖ້ວນ, ຖ້າເອກະສານບໍ່ຖືກຕ້ອງຄົບຖ້ວນ ແຈ້ງຄືນໜ່ວຍງານອາຫານ ແລະ ຢາ, ຫ້ອງການສາທາລະນະສຸກເມືອງ, ນະຄອນ ແລະ ຜູ້ປະກອບການ ພາຍໃນ 10 ວັນລັດຖະການ ເພື່ອປັບປຸງແກ້ໄຂ ແລະ ສົ່ງກັບຄືນ ພາຍໃນ 30 ວັນລັດຖະການ.

**ມາດຕາ 20 ອາຍຸຂອງໃບທະບຽນອາຫານ (ປັບປຸງ)**

ທະບຽນອາຫານມີອາຍຸການນຳໃຊ້ ດັ່ງນີ້:

1 ທະບຽນອາຫານພາຍໃນ ສຳລັບໂຮງງານອຸດສາຫະກຳ ທີ່ບັນລຸຕາມມາດຕະຖານການຜະລິດທີ່ດີ (GMP) ຫຼື ສຸຂະອະນາໄມທີ່ດີ (GHP) ຫຼື ການວິເຄາະອັນຕະລາຍ ແລະ ຈຸດທີ່ຕ້ອງຄວາມຄຸມ (HACCP) ມີອາຍຸ 3 ປີ;
2 ທະບຽນອາຫານພາຍໃນ ສຳລັບໂຮງງານອຸດສາຫະກຳ ແລະ ທະບຽນອາຫານນຳເຂົ້າ ມີອາຍຸ 2 ປີ;
3 ທະບຽນອາຫານພາຍໃນ ສຳລັບໂຮງງານຂະໜາດນ້ອຍແບບຄອບຄົວ ມີອາຍຸ 2 ປີ.

ກ່ອນໝົດອາຍຸ 90 ວັນ ໃຫ້ຜູ້ປະກອບການ ປະກອບເອກະສານ ເພື່ອຂໍຕໍ່ທະບຽນຄືນໃໝ່.

**ມາດຕາ 21 ການປ່ຽນແປງ ຫຼື ປັບປຸງສະຖານທີ່, ອາຄານ ແລະ ຂໍ້ມູນການຜະລິດອາຫານ (ໃໝ່)**

ການປ່ຽນແປງ ຫຼື ປັບປຸງສະຖານທີ່, ອາຄານ ແລະ ຂໍ້ມູນການຜະລິດອາຫານ ຕ້ອງແຈ້ງຕໍ່ກົມອາຫານແລະຢາ ດັ່ງລຸ່ມນີ້:

1. ສະຖານທີ່, ອາຄານ, ສາງ, ເຄື່ອງມື, ເຄື່ອງຈັກ ແລະ ອຸປະກອນຜະລິດອາຫານພາຍໃນ ຫຼື ນຳເຂົ້າ;
2. ຊື່ຜູ້ປະກອບການ, ຊື່ວິສາຫະກິດ, ກາໝາຍຂອງຜະລິດຕະພັນ;
3. ຂໍ້ມູນຜະລິດຕະພັນ ເຊັ່ນ: ສ່ວນປະກອບ, ສູດຕຳລາ ແລະ ກຳມະວິທີການຜະລິດ, ຮູບແບບຂອງຜະລິດຕະພັນ;
4. ສະຫຼາກຜະລິດຕະພັນ ລວມທັງຂໍ້ມູນທັງໝົດ, ຂະໜາດບັນຈຸ, ພາຊະນະບັນຈຸ ແລະ ການຫຸ້ມຫໍ່;
5. ການປ່ຽນແປງ ຫຼື ປັບປຸງອື່ນ ທີ່ມີຜົນກະທົບຕໍ່ຄຸນນະພາບ ແລະ ຄວາມປອດໄພອາຫານ.

**ມາດຕາ 22 ການໂຈະໃບທະບຽນອາຫານ (ປັບປຸງ)**

ການໂຈະໃບທະບຽນອາຫານ ແມ່ນປະຕິບັດຕາມເງື່ອນໄຂດັ່ງນີ້:

1. ມີການລະບາດຂອງພະຍາດ ຫຼື ເຫດການສຸກເສີນຈາກອາຫານເປັນພິດ;
2. ຜົນການວິໄຈບໍ່ບັນລຸຕາມມາດຕະຖານ ແລະ ບໍ່ປະຕິບັດຕາມບົດບັນທຶກ, ການແນະນຳ, ການຕັກເຕືອນຂອງເຈົ້າໜ້າທີ່ກວດກາອາຫານ**;**
3. ມີແຈ້ງການ ຫຼື ຂໍ້ມູນຈາກຜູ້ຜະລິດພາຍໃນ ແລະ ຕ່າງປະເທດ, ອົງການຈັດຕັ້ງຂອງລັດ, ອົງການຈັດຕັ້ງສາກົນທີ່ກ່ຽວຂ້ອງວ່າ ເປັນຜະລິດຕະພັນອາຫານທີ່ບໍ່ມີຄຸນນະພາບ ແລະ ບໍ່ປອດໄພຕໍ່ສຸຂະພາບຂອງຜູ້ບໍລິໂພກ;
4. ປອມແປງສູດຕຳລາຂອງຜະລິດຕະພັນອື່ນ ຫຼື ບໍ່ປະຕິບັດຕາມທີ່ລະບຸໄວ້ໃນສະຫຼາກທີ່ໄດ້ຂຶ້ນທະບຽນ;
5. ການໂຄສະນາເກີນຄວາມຈິງ ເນື້ອໃນບໍ່ສອດຄ່ອງກັບທີ່ໄດ້ລະບຸໄວ້ໃນເອກະສານຂໍຂຶ້ນທະບຽນ ແລະ ບໍ່ໄດ້ຮັບອະນຸຍາດດ້ານເນື້ອໃນຈາກກົມອາຫານ ແລະ ຢາ ແລະ ຂະແໜງການກ່ຽວຂ້ອງ.

ທຸລະກິດທີ່ຖືກໂຈະທະບຽນ ຈະດຳເນີນຄືນໄດ້ກໍຕໍ່ເມື່ອຜູ້ປະກອບການໄດ້ມີການປັບປຸງຂໍ້ບົກຜ່ອງຂອງຕົນສຳເລັດຕາມກຳນົດເວລາ ແລະ ຜ່ານການກວດກາຮັບຮອງຈາກເຈົ້າໜ້າທີ່ອາຫານ ແລະ ຢາ.

**ມາດຕາ 23 ການຖອນໃບທະບຽນອາຫານ (ປັບປຸງ)**

ການຖອນໃບທະບຽນອາຫານ ແມ່ນປະຕິບັດຕາມເງື່ອນໄຂດັ່ງນີ້:

1. ການດຳເນີນທຸລະກິດລົ້ມລະລາຍ, ຢຸດເຊົາ ມີການປ່ຽນແປງໂດຍບໍ່ເປັນໄປຕາມຈຸດປະສົງ ທີ່ບໍ່ກ່ຽວຂ້ອງ ກັບອາຫານ;
2. ບໍ່ມີການເຄື່ອນໄຫວດຳເນີນກິດຈະການພາຍຫຼັງທີ່ໄດ້ຮັບທະບຽນແລ້ວ 1 ປີ;
3. ເຈົ້າຂອງທະບຽນອາຫານເສຍຊີວິດໂດຍບໍ່ມາແຈ້ງ ຫຼື ປ່ຽນຊື່ຜູ້ຖືທະບຽນໃໝ່ແຕ່ຍັງສືບຕໍ່ດຳເນີນກິດຈະ ການເກີນ 1 ປີ;
4. ຫົວໜ່ວຍດຳເນີນທຸລະກິດດ້ານອາຫານທີ່ບໍ່ຕໍ່ອາຍຸໃບທະບຽນ ພາຍຫຼັງໝົດອາຍຸເກີນ 1 ປີ ຫຼື ບໍ່ປະຕິບັດຕາມຄຳແນະນຳ ຕັກເຕືອນຂອງເຈົ້າໜ້າທີ່ກວດກາອາຫານເກີນ 3 ຄັ້ງ;
5. ມີແຈ້ງການຈາກອົງການຈັດຕັ້ງຂອງລັດ, ອົງການຈັດຕັ້ງສາກົນທີ່ກ່ຽວຂ້ອງ ທັງພາຍໃນ ແລະ ຕ່າງປະເທດ ຢັ້ງຢືນວ່າເປັນຜະລິດຕະພັນອາຫານບໍ່ມີຄຸນນະພາບ, ບໍ່ປອດໄພ ແລະ ມີອັນຕະລາຍເຖິງແກ່ຊີວິດຂອງຜູ້ບໍລິໂພກ;
6. ມີການກະທຳອື່ນທີ່ເປັນການລະເມີດລະບຽບກົດໝາຍ.

ການຖອນທະບຽນ ກົມອາຫານ ແລະ ຢາ ຈະໄດ້ແຈ້ງເປັນລາຍລັກອັກສອນໃຫ້ທາງຂະແໜງອຸດສາຫະກຳ ແລະ ການຄ້າ ເພື່ອພິຈາລະນາຕາມລະບຽບການ.

## ໝວດທີ 4
## ສະຫຼາກອາຫານ

**ມາດຕາ 24 ສະຫຼາກອາຫານ (ປັບປຸງ)**

ການໃສ່ສະຫຼາກອາຫານຕ້ອງປະຕິບັດຕາມຂໍ້ຕົກລົງ ວ່າດ້ວຍສະຫຼາກຂອງຜະລິດຕະພັນອາຫານທີ່ບັນຈຸໃນເຄື່ອງຫຸ້ມຫໍ່ ແລະ ຄວນມີອົງປະກອບດັ່ງນີ້:

**1. ຂໍ້ມູນສະຫຼາກ**

- ຊື່ຂອງຜະລິດຕະພັນ;
- ສ່ວນປະສົມ ຫຼື ສ່ວນປະກອບຂອງອາຫານ;
- ນໍ້າໜັກ ຫຼື ບໍລິມາດໃນການບັນຈຸ;
- ຊື່ທີ່ຢູ່ຂອງສະຖານທີ່ດຳເນີນທຸລະກິດອາຫານ ແລະ ເງື່ອນໄຂໃນການຕິດຕໍ່ຂອງຜູ້ຜະລິດ ຫຼື ຜູ້ນຳເຂົ້າ;
- ຊຸດຜະລິດ ແລະ ວັນເດືອນປີຜະລິດ, ວັນເດືອນປີໝົດອາຍຸ;
- ເລກທີຂຶ້ນທະບຽນຜະລິດຕະພັນອາຫານ;
- ຂໍ້ແນະນຳໃນການນຳໃຊ້, ເກັບຮັກສາ ແລະ ຄຳເຕືອນ.

**2. ເນື້ອໃນສະຫຼາກ**

- ສະຫລາກຕ້ອງເປັນພາສາລາວ, ຖ້າມີພາສາສາກົນ ຫຼື ພາສາອັງກິດ ຂະໜາດຂອງພາສາລາວຕ້ອງໃຫຍ່ກວ່າ ແລະ ຢູ່ເທິງ.
- ຊື່ຂອງຜະລິດຕະພັນຕ້ອງມີຄວາມເໝາະສົມ, ສັ້ນກະທັດຮັດຊື່ດຽວ ແລະ ບໍ່ຍາວເກີນໄປ;
- ຂໍ້ຄວາມທີ່ລະບຸໃນສະຫຼາກຕ້ອງບໍ່ມີລັກສະນະເປັນການໂຄສະນາ;
- ສະຫຼາກອາຫານຕ້ອງສອດຄ່ອງ ເໝາະສົມກັບຄວາມເປັນຈິງໃນຕ່ອງໂສ້ການຜະລິດ;

**ມາດຕາ 25 ເລກທະບຽນອາຫານ (ໃໝ່)**

ເລກທະບຽນອາຫານປະກອບດ້ວຍໜ່ວຍງານທີ່ອອກອະນຸຍາດ ແລະ ໝາຍເລກ 12 ໂຕ ທີ່ມີໂຄງຮ່າງຄື:

**ອປ:X-XX-XXXXX-XXXX**

ໝາຍເລກແຕ່ລະໂຕມີຄວາມໝາຍດັ່ງລຸ່ມນີ້:

1. **ເລກລຳດັບທີ 1** : ໝາຍເຖິງຫົວໜ່ວຍທຸລະກິດອາຫານທີ່ດຳເນີນກິດຈະກຳ, ໃຫ້ໃຊ້ໂຕເລກ 1-3 ຊຶ່ງແຕ່ລະໂຕມີຄວາມໝາຍຄື:
   - ເລກ 1 ໝາຍເຖິງ ໂຮງງານອຸດສາຫະກຳອາຫານພາຍໃນ
   - ເລກ 2 ໝາຍເຖິງ ບໍລິສັດນຳເຂົ້າອາຫານ
   - ເລກ 3 ໝາຍເຖິງ ໂຮງງານຂະໜາດນ້ອຍແບບຄອບຄົວ
2. **ເລກລຳດັບທີ 2 ແລະ 3** : ໝາຍເຖິງເລກລຳດັບ ແຂວງ ຫຼື ນະຄອນຫຼວງ ຂອງສະຖານທີ່ຕັ້ງຂອງໂຮງງານ ຫຼື ບໍລິສັດສົ່ງອອກ-ນຳເຂົ້າອາຫານ, ໃຫ້ໃຊ້ໂຕເລກ 01-18;
3. **ເລກລຳດັບທີ 4, 5, ແລະ 6** : ໝາຍເຖິງ ເລກລຳດັບທີ ຂອງໂຮງງານ ຫຼື ບໍລິສັດສົ່ງອອກ-ນຳເຂົ້າອາຫານ ທີ່ດຳເນີນກິດຈະການຕາມປະເພດຂອງທຸລະກິດ;
4. **ເລກລຳດັບທີ 7 ແລະ 8 :** ໝາຍເຖິງ ເລກທ້າຍສອງໂຕຂອງປີ ຄ.ສ ທີ່ຂຶ້ນທະບຽນ;
5. **ເລກລຳດັບທີ 9, 10, 11 ແລະ 12** : ໝາຍເຖິງ ເລກລຳດັບຜະລິດຕະພັນຂອງໂຮງງານ ຫຼື ບໍລິສັດສົ່ງອອກ-ນຳເຂົ້າອາຫານ ທີ່ຂຶ້ນທະບຽນອາຫານ.

ອາຫານທີ່ໄດ້ຮັບການຂຶ້ນທະບຽນແລ້ວຕ້ອງໄດ້ລະບຸ ເລກທະບຽນໃສ່ສະຫຼາກຂອງອາຫານທີ່ໄດ້ຂຶ້ນທະບຽນເທົ່ານັ້ນ, ຍົກເວັ້ນເຄື່ອງດື່ມມີທາດເຫຼົ້າບໍ່ໃຫ້ລະບຸເລກທະບຽນ ໃສ່ສະຫຼາກຜະລິດຕະພັນດັ່ງກ່າວ.

**ມາດຕາ 26 ການກ່າວອ້າງອາຫານ ຄຸນນະພາບດີເລີດ (Premium) (ໃໝ່)**

ການກ່າວອ້າງອາຫານ ຄຸນນະພາບດີເລີດ (Premium) ໃສ່ສະຫຼາກອາຫານ ຕ້ອງໄດ້ຮັບອະນຸຍາດຈາກກົມອາຫານ ແລະ ຢາ, ກະຊວງສາທາລະນະສຸກ ໂດຍຕ້ອງມີເງື່ອນໄຂຄົບດັ່ງລຸ່ມນີ້:

1. ໄດ້ຮັບການຂຶ້ນທະບຽນ ຈາກກົມອາຫານ ແລະ ຢາ,ກະຊວງສາທາລະນະສຸກ;
2. ໄດ້ຮັບຮອງຫຼັກການ ການຜະລິດທີ່ດີ ຫຼື ສຸຂະອະນາໄມທີ່ດີ (Good Manufacturing Practice; GMP ຫຼື Good Hygiene Practice; GHP), ການວິເຄາະອັນຕະລາຍ ແລະ ຈຸດທີ່ຕ້ອງຄວບຄຸມ (Hazard Analysis and Critical Control Point; HACCP) ຫຼື ມາດຕະຖານທີ່ສູງກ່ວາ;
3. ມີມາດຕະຖານກຳນົດສະເພາະ.

## ໝວດທີ 5
## ການວິໄຈອາຫານ, ຄ່າທຳນຽມ ແລະ ຄ່າບໍລິການ

**ມາດຕາ 27 ການວິໄຈອາຫານເພື່ອຂຶ້ນ ຫຼື ຕໍ່ທະບຽນ (ໃໝ່)**

ອາຫານຜະລິດພາຍໃນ ທີ່ມີຈຸດປະສົງເພື່ອ ຂຶ້ນ ຫຼື ຕໍ່ທະບຽນ ຕ້ອງໄດ້ນຳສົ່ງ ວິໄຈຄຸນນະພາບ ທີ່ສູນວິໄຈອາຫານ ແລະ ຢາ, ກະຊວງສາທາລະນະສຸກ ຫຼື ຫ້ອງວິໄຈອື່ນ ທັງພາຍໃນ ແລະ ຕ່າງປະເທດ ທີ່ກະຊວງສາທາລະນະສຸກຮັບຮູ້;

ອາຫານນຳເຂົ້າຕ້ອງມີໃບຢັ້ງຢືນຜົນວິໄຈ, ທີ່ອອກໂດຍ ອົງການຄຸ້ມຄອງຄວາມປອດໄພອາຫານຂອງປະເທດຜູ້ຜະລິດ ຫຼື ຫ້ອງວິໄຈ ທີ່ໄດ້ມີການຮັບຮູ້ຢ່າງເປັນທາງການຂອງປະເທດຜູ້ຜະລິດ, ຖ້າບໍ່ມີໃບຢັ້ງຢືນຜົນວິໄຈ ຕ້ອງເອົາຕົວຢ່າງໄປວິໄຈຄຸນນະພາບ ທີ່ສູນວິໄຈອາຫານ ແລະ ຢາ, ກະຊວງສາທາລະນະສຸກ ຫຼື ຫ້ອງວິໄຈອື່ນ ທັງພາຍໃນ ແລະ ຕ່າງປະເທດ ທີ່ກະຊວງສາທາລະນະສຸກຮັບຮູ້ ກ່ອນການປະກອບເອກະສານຂໍຂຶ້ນທະບຽນ.

ໃບຢັ້ງຢືນຜົນການວິໄຈອາຫານ ມີອາຍຸການນຳໃຊ້ 1 ປີ, ຄ່າໃຊ້ຈ່າຍຕ່າງໆກ່ຽວກັບການວິໄຈ ລວມທັງການວິໄຈຕິດຕາມຄຸນນະພາບ ແມ່ນຄວາມຮັບຜິດຊອບຂອງຜູ້ປະກອບການ.

**ມາດຕາ 28 ການວິໄຈອາຫານເພື່ອຕິດຕາມຄຸນນະພາບ (ໃໝ່)**

ການວິໄຈອາຫານເພື່ອຕິດຕາມຄຸນນະພາບ ແມ່ນປະຕິບັດດັ່ງນີ້:

1. ໂຮງງານທີ່ປະຕິບັດຫຼັກການຜະລິດອາຫານທີ່ດີ (GMP) ຫຼື ສຸຂະອະນາໄມທີ່ດີ (GHP), ການວິເຄາະອັນຕະລາຍ ແລະ ຈຸດທີ່ຕ້ອງຄວບຄຸມ (HACCP) ແລະ ຜົນການວິໄຈຜ່ານມາບັນລຸມາດຕະຖານທຸກຄັ້ງ ແມ່ນປະຕິບັດ ໜຶ່ງຄັ້ງຕໍ່ປີ;
2. ໂຮງງານທີ່ປະຕິບັດບໍ່ສອດຄ່ອງຕາມຫຼັກສຸຂະນາໄມໃນການຜະລິດອາຫານ ແລະ ຜົນການວິໄຈຜ່ານມາບໍ່ບັນລຸມາດຕະຖານ ແມ່ນປະຕິບັດ ສອງ ຫຼື ຫຼາຍຄັ້ງ ຕໍ່ປີ ຈົນກວ່າຜົນວິໄຈບັນລຸມາດຕະຖານ;
3. ບໍລິສັດນຳເຂົ້າອາຫານຕ້ອງໄດ້ວິໄຈຕິດຕາມຄຸນນະພາບຜະລິດຕະພັນອາຫານປີລະໜຶ່ງຄັ້ງ;
4. ຄ່າໃຊ້ຈ່າຍກ່ຽວກັບການວິໄຈຕິດຕາມຄຸນນະພາບ ແມ່ນຄວາມຮັບຜິດຊອບຂອງຜູ້ປະກອບການ;
5. ກໍລະນີຮ້ອງທຸກ ຫຼື ສະເໜີກ່ຽວກັບການເບື່ອອາຫານ, ສົງໃສວ່າອາຫານປົນເປື້ອນ ແລະ ບໍ່ມີຄວາມປອດໄພຕໍ່ການບໍລິໂພກ ຕ້ອງໄດ້ສົ່ງຕົວຢ່າງວິໄຈ ແລະ ຄ່າໃຊ້ຈ່າຍ ແມ່ນຄວາມຮັບຜິດຊອບຂອງລັດ;
6. ກໍລະນີມີການສະເໜີ, ຮ້ອງຟ້ອງ ແມ່ນອີງຕາມຜົນວິໄຈ, ຖ້າບັນລຸມາດຕະຖານ ແມ່ນຄວາມຮັບຜິດຊອບຂອງຜູ້ຮ້ອງຟ້ອງ, ແຕ່ຖ້າບໍ່ບັນລຸມາດຕະຖານ ແມ່ນເຈົ້າຂອງຜະລິດຕະພັນຮັບຜິດຊອບ.

**ມາດຕາ 29 ການເກັບຕົວຢ່າງ ແລະ ສົ່ງວິໄຈອາຫານ (ໃໝ່)**

ການເກັບຕົວຢ່າງ ແລະ ສົ່ງວິໄຈອາຫານ ຕ້ອງແມ່ນເຈົ້າໜ້າທີ່ກວດກາອາຫານຂອງກົມອາຫານ ແລະ ຢາ, ກອງກວດກາອາຫານ ແລະ ຢາ, ຂະແໜງອາຫານ ແລະ ຢາ ແຂວງ, ນະຄອນຫຼວງ, ຫ້ອງການສາທາລະນະສຸກເມືອງ, ທີ່ໄດ້ຮັບການມອບໝາຍ ໂດຍປະຕິບັດຕາມຄູ່ມືການເກັບຕົວຢ່າງ;

ຕົວຢ່າງອາຫານທີ່ຈະນຳສົ່ງໄປວິໄຈ ຕ້ອງບັນຈຸໃນພາຊະນະຫົວໜ່ວຍມັດທໍ່ເດີມ, ສຳລັບຕົວຢ່າງທີ່ມີພາຊະນະບັນຈຸຂະໜາດໃຫຍ່ ສາມາດແບ່ງບັນຈຸໃສ່ພາຊະນະທີ່ເໝາະສົມ ແລະ ລະບຸຊື່ຕາມສະຫຼາກເດີມ; ສຳລັບຈຳນວນ ຫຼື ປະລິມານຕົວຢ່າງທີ່ຈະສົ່ງວິໄຈ ແມ່ນປະຕິບັດຕາມຄູ່ມືການເກັບຕົວຢ່າງຂອງສູນວິໄຈ ອາຫານ ແລະ ຢາ ແຫ່ງຊາດ ຫຼື ຫ້ອງວິໄຈທີ່ກະຊວງສາທາລະນະສຸກຮັບຮູ້.

**ມາດຕາ 30 ລາຍການວິໄຈ (Parameters) (ໃໝ່)**

ລາຍການວິໄຈອາຫານ ແມ່ນປະຕິບັດຕາມມາດຕະຖານຂອງ ສປປ ລາວ ຫຼື ມາດຕະຖານອາຫານປະເທດນຳເຂົ້າ. ໃນກໍລະນີທີ່ບໍ່ທັນມີມາດຕະຖານອາຫານຂອງ ສປປ ລາວ ຕ້ອງໄດ້ປະຕິບັດຕາມມາດຕະຖານກົດລະຫັດອາຫານສາກົນ ຫຼື ມາດຕະຖານອາຫານອາຊຽນ.

**ມາດຕາ 31 ການພິຈາລະນາຜົນວິໄຈ (ໃໝ່)**

ການພິຈາລະນາຜົນການວິໄຈອາຫານ ປະຕິບັດດັ່ງນີ້:

1. ການພິຈາລະນາຜົນການວິໄຈແມ່ນອີງຕາມມາດຕະຖານອາຫານຂອງ ສປປ ລາວ, ມາດຕະຖານກົດລະຫັດອາຫານສາກົນ ຫຼື ມາດຕະຖານອາຫານອາຊຽນ;
2. ຜົນການວິໄຈທີ່ບໍ່ບັນລຸມາດຕະຖານອາຫານ ຕ້ອງໄດ້ປັບປຸງຕາມຄຳແນະນຳ ແລະ ໃຫ້ເອົາຕົວຢ່າງມາວິໄຈຄືນພາຍໃນເວລາບໍ່ເກີນ 10 ວັນລັດຖະການ ໂດຍເຈົ້າຂອງຜະລິດຕະພັນສາມາດນຳເອົາຕົວຢ່າງໄປວິໄຈໃນຫ້ອງວິໄຈທີ່ທາງການຮັບຮູ້ ທັງພາຍໃນ ແລະ ຕ່າງປະເທດ.

**ມາດຕາ 32 ຄ່າທຳນຽມ ແລະ ຄ່າບໍລິການ (ປັບປຸງ)**

ຄ່າທຳນຽມ ແລະ ຄ່າບໍລິການ ການຂຶ້ນ, ຕໍ່ທະບຽນ ແລະ ການວິໄຈ ອາຫານທີ່ຜະລິດພາຍໃນປະເທດ ແລະ ນຳເຂົ້າ ໃຫ້ປະຕິບັດຕາມ ລັດຖະບັນຍັດຂອງປະທານປະເທດວ່າດ້ວຍຄ່າທຳນຽມ ແລະ ຄ່າ

ບໍລິການຕາມແຕ່ລະໄລຍະ.

## ໝວດທີ 6
## ສິດ ແລະ ພັນທະຂອງຜູ້ຂຶ້ນທະບຽນອາຫານ

### ມາດຕາ 33 ສິດຂອງຜູ້ຂຶ້ນທະບຽນອາຫານ (ໃໝ່)

ຜູ້ຂຶ້ນທະບຽນອາຫານ ມີສິດດັ່ງນີ້:

1. ຮັບຂໍ້ມູນຂ່າວສານກ່ຽວກັບລະບຽບ, ຂັ້ນຕອນການຂຶ້ນທະບຽນອາຫານ;
2. ຮັບແຈ້ງຜົນຂອງການພິຈາລະນາການຂຶ້ນ, ການຕໍ່ທະບຽນ ແລະ ຜົນການວິໄຈ;
3. ໄດ້ຮັບບຸລິມະສິດໃນການຮັບອະນຸຍາດຢັ້ງຢືນການສົ່ງອອກ;
4. ຮ້ອງຮຽນກ່ຽວກັບການລະເມີດສິດ ຜະລິດຕະພັນຂອງຕົນທີ່ໄດ້ຂຶ້ນທະບຽນ ຫຼື ການປະຕິບັດໜ້າທີ່ຂອງເຈົ້າໜ້າທີ່ກວດກາອາຫານ ແລະ ຢາ;
5. ປະຕິບັດສິດອື່ນຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

### ມາດຕາ 34 ພັນທະຂອງຜູ້ຂຶ້ນທະບຽນອາຫານ (ໃໝ່)

ຜູ້ຂຶ້ນທະບຽນອາຫານ ມີພັນທະດັ່ງນີ້:

1. ປະຕິບັດລະບຽບກົດໝາຍກ່ຽວກັບອາຫານ ຢ່າງເຂັ້ມງວດ;
2. ໃຫ້ຄວາມຮ່ວມມື ແລະ ອຳນວຍຄວາມສະດວກແກ່ເຈົ້າໜ້າທີ່ກວດກາອາຫານ ແລະ ຢາ ໃນເວລາປະຕິ ບັດໜ້າທີ່;
3. ຮັບປະກັນການຜະລິດ, ສົ່ງອອກ-ນຳເຂົ້າ, ຈຳໜ່າຍບໍລິການ ແລະ ບໍລິຈາກອາຫານ ໃຫ້ມີຄຸນນະພາບ ແລະ ຄວາມປອດໄພ;
4. ຈ່າຍຄ່າທຳນຽມ, ຄ່າບໍລິການ ແລະ ຄ່າເສຍຫາຍທັງໝົດທີ່ເກີດຂຶ້ນຈາກຄວາມຜິດ ກ່ຽວກັບທຸລະກິດ ແລະ ຜະລິດຕະພັນອາຫານຂອງຕົນ;
5. ສືບຄົ້ນຫາ ແລະ ເກັບຄືນອາຫານ ທີ່ບໍ່ມີຄຸນນະພາບ ແລະ ບໍ່ມີຄວາມປອດໄພ;
6. ສະຫຼຸບລາຍງານຂໍ້ມູນຂ່າວສານໃຫ້ຖືກຕ້ອງກ່ຽວກັບຄວາມປອດໄພອາຫານ;
7. ປະຕິບັດພັນທະອື່ນ ຕາມທີກຳນົດໄວ້ໃນລະບຽບກົດໝາຍ.

## ໝວດທີ 7
## ຂໍ້ຫ້າມ

### ມາດຕາ 35 ຂໍ້ຫ້າມສຳລັບຜູ້ປະກອບການດ້ານທຸລະກິດອາຫານ (ປັບປຸງ)

ຫ້າມຜູ້ປະກອບການດ້ານທຸລະກິດອາຫານ ມີພຶດຕິກຳ ດັ່ງນີ້:

1. ຜະລິດ, ສົ່ງອອກ, ນຳເຂົ້າ ແລະ ຈຳໜ່າຍອາຫານ ໂດຍບໍ່ໄດ້ຂຶ້ນທະບຽນນຳກົມອາຫານ ແລະ ຢາ ຫຼື ພະແນກສາທາລະນະສຸກແຂວງ,ນະຄອນຫຼວງ.
2. ນຳໃຊ້ທະບຽນອາຫານທີ່ໝົດອາຍຸ ໃນການຜະລິດ, ສົ່ງອອກ, ນຳເຂົ້າ ແລະ ຈຳໜ່າຍອາຫານໂດຍເດັດຂາດ;
3. ປອມແປງສູດຕຳລາ, ສະຫຼາກ, ກາໝາຍ ແລະ ເລກທະບຽນ ຂອງອາຫານທີ່ໄດ້ຂຶ້ນທະບຽນແລ້ວ ແລະ ນຳເອົາຜະລິດຕະພັນຂອງຜູ້ອື່ນມາວິໄຈແທນຜະລິດຕະພັນຂອງຕົນ;
4. ດັດແປງສູດຕຳລາ, ເພີ້ມຕື່ມ ຫຼື ເອົາອອກສານໃດໜຶ່ງທີ່ບໍ່ໄດ້ກຳນົດໃນສູດຕຳລາທີໄດ້ຮັບການຈົດທະບຽນແລ້ວ ໂດຍບໍ່ໄດ້ຮັບອະນຸຍາດຈາກກົມອາຫານ ແລະ ຢາ ຫຼື ພະແນກສາທາລະນະສຸກແຂວງ, ນະຄອນຫຼວງ ເພື່ອຈຸດປະສົງອື່ນ;

5. ໂຄສະນາ, ກ່າວອ້າງສັບພະຄຸນຂອງອາຫານ ແລະ ຂໍ້ຄວາມທາງດ້ານຄຸນນະພາບເກີນຄວາມເປັນຈິງ ໂດຍບໍ່ໄດ້ຮັບອະນຸຍາດຈາກກົມອາຫານ ແລະ ຢາ ຫຼື ພະແນກສາທາລະນະສຸກແຂວງ, ນະຄອນຫຼວງ;
6. ນໍາໃຊ້ວັດຖຸດິບ, ສານເຄມີ ແລະ ສ່ວນປະກອບອື່ນໆ ເພື່ອຜະລິດປຸງແຕ່ງ, ບັນຈຸຫຸ້ມຫໍ່ ແລະ ເກັບຮັກສາທີ່ບໍ່ແມ່ນຊະນິດວັດຖຸ ຫຼື ສານສໍາລັບໃຊ້ກັບອາຫານ;
7. ຮັບພະນັກງານທີ່ເປັນພະຍາດຕິດຕໍ່, ເສບສິ່ງເສບຕິດ ແລະ ມຶນເມົາ ເຮັດວຽກໃນຂະບວນການຜະລິດອາຫານ;
8. ມີພຶດຕິກໍາອື່ນ ທີ່ເປັນການລະເມີດລະບຽບກົດໝາຍ.

**ມາດຕາ 36 ຂໍ້ຫ້າມສໍາລັບເຈົ້າໜ້າທີ່ອາຫານ ແລະ ຢາ (ໃໝ່)**

ຫ້າມພະນັກງານອາຫານ ແລະ ຢາ ປະພຶດດັ່ງນີ້:

1. ປະຕິບັດໜ້າທີ່ ທີ່ຂາດຄວາມຍຸຕິທໍາ, ລໍາອຽງ ແລະ ບໍ່ຖືກຕ້ອງໃນການພິຈາລະນາຂຶ້ນ ຫຼື ຕໍ່ທະບຽນ;
2. ກົດໜ່ວງຖ່ວງດຶງ, ທວງເອົາສິນບົນ, ຮຽກຮ້ອງຄ່າຕອບແທນ, ສວຍໃຊ້ຖານະຕໍາແໜ່ງ, ສິດ ແລະ ໜ້າທີ່ທາງລັດຖະການເພື່ອຜົນປະໂຫຍດສ່ວນຕົວ;
3. ປອມແປງເອກະສານ ຫຼື ນໍາໃຊ້ເອກະສານປອມ ຫຼື ສະໜອງຂໍ້ມູນທີ່ເປັນຄວາມລັບຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ໂດຍບໍ່ໄດ້ຮັບການອະນຸຍາດ;
4. ປົກປິດ, ສະໜັບສະໜູນ, ຊ່ວຍເຫຼືອ ແລະ ສົມຮູ້ຮ່ວມຄິດກັບຜູ້ປະກອບການດ້ານທຸລະກິດອາຫານທີ່ບໍ່ບັນລຸມາດຕະຖານຄຸນນະພາບ ແລະ ຄວາມປອດໄພ;
5. ເປີດເຜີຍຂໍ້ມູນທາງວິຊາການກ່ຽວກັບສູດຕໍາລາ, ກໍາມະວິທີການຜະລິດ ແລະ ຂໍ້ມູນອື່ນທີ່ກ່ຽວຂ້ອງ;
6. ມີພຶດຕິກໍາອື່ນ ທີ່ເປັນການລະເມີດລະບຽບກົດໝາຍ.

## ໝວດທີ 8
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 37 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ເປັນຕົ້ນ ການດໍາເນີນທຸລະກິດອາຫານ ໄດ້ມາດຕະຖານ, ຄຸນນະພາບ, ມີຄວາມປອດໄພ ມາໂດຍຕະຫຼອດໃນໄລຍະເວລາ 3 ປີ ຈະໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍອື່ນຕາມລະບຽບກົດໝາຍ (ມາດຕະຖານການຍ້ອງຍໍຈະຖືກກໍານົດໃນລະບຽບການສະເພາະ).

**ມາດຕາ 38 ມາດຕະການຕໍ່ຜູ້ລະເມີດ (ປັບປຸງ)**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກສຶກສາອົບຮົມ, ກ່າວເຕືອນ ,ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍ ຫຼື ລົງໂທດອາຍາຕາມແຕ່ກໍລະນີ.

**ມາດຕາ 39 ມາດຕະການສຶກສາອົບຮົມ (ປັບປຸງ)**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ລະເມີດຂໍ້ຫ້າມໃນຂໍ້ຕົກລົງສະບັບນີ້ຈະຖືກປະຕິບັດມາດຕະການດັ່ງລຸ່ມນີ້:

**ຄັ້ງທີໜຶ່ງ:** ຈະຖືກກ່າວເຕືອນສຶກສາອົບຮົມພ້ອມທັງເຮັດບົດບັນທຶກໄວ້ເປັນຫຼັກຖານ ແລະ ອາຍັດຜະລິດຕະພັນ;

**ຄັ້ງທີສອງ:** ຈະຖືກປັບໃໝ, ອາຍັດຜະລິດຕະພັນ ແລະ ໂຈະໃບທະບຽນອາຫານ;

**ຄັ້ງທີສາມ:** ຈະຖືກປັບໃໝ, ອາຍັດຜະລິດຕະພັນ, ຖອນໃບທະບຽນອາຫານ ແລະ ແຈ້ງໃຫ້ຂະແໜງອຸດສາຫະກໍາ ແລະ ການຄ້າ ດໍາເນີນການຖອນໃບອະນຸຍາດດໍາເນີນທຸລະກິດຕາມລະບຽບການ.

**ມາດຕາ 40 ມາດຕະການປັບໃໝ (ປັບປຸງ)**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດຂໍ້ຕົກລົງສະບັບນີ້ຈະຖືກປັບໃໝດັ່ງນີ້:

1. ຜະລິດ, ສົ່ງອອກ, ນຳເຂົ້າ ແລະ ຈຳໜ່າຍອາຫານທີ່ມີຄວາມສ່ຽງສູງ ໂດຍບໍ່ໄດ້ຂຶ້ນທະບຽນນຳກົມອາຫານ ແລະ ຢາ ຈະຖືກປັບໃໝ 50% ຂອງມູນຄ່າຜະລິດຕະພັນຕໍ່ຄັ້ງ;
2. ບໍ່ມາຕໍ່ທະບຽນອາຫານເກີນກຳນົດເວລາ 6 ເດືອນ ຈະຖືກປັບໃໝ 500,000 ກີບຕໍ່ຄັ້ງ; ແລະ ຖ້າບໍ່ມາຕໍ່ເກີນ 1 ປີ ຈະຖືກປັບໃໝ 1,000,0000 ກີບ;
3. ປອມແປງສູດຕຳລາ, ສະຫຼາກ, ກາໝາຍ ແລະ ເລກທະບຽນ ຂອງອາຫານທີ່ໄດ້ຂຶ້ນທະບຽນແລ້ວ ຈະຖືກປັບໃໝ 2.000.000 ກີບຕໍ່ຜະລິດຕະພັນ;
4. ນຳເອົາຜະລິດຕະພັນຂອງຜູ້ອື່ນມາວິໄຈແທນຜະລິດຕະພັນຂອງຕົນ ຈະຖືກປັບໃໝ 3.000.000 ກີບຕໍ່ຕົວຢ່າງຕໍ່ຄັ້ງ;
5. ດັດແປງສູດຕຳລາ, ເພີ່ມຕື່ມ ຫຼື ເອົາອອກສານໃດໜຶ່ງທີ່ບໍ່ໄດ້ກຳນົດໃນສູດຕຳລາທີໄດ້ຮັບການຂຶ້ນທະບຽນແລ້ວໂດຍບໍ່ໄດ້ຮັບອະນຸຍາດຈາກກົມອາຫານ ແລະ ຢາ ຫຼື ພະແນກສາທາລະນະສຸກແຂວງ, ນະຄອນຫຼວງ ເພື່ອຈຸດປະສົງອື່ນ ຈະຖືກປັບໃໝ 2.000.000 ກີບຕໍ່ຄັ້ງ;
6. ໂຄສະນາ, ກ່າວອ້າງສັບພະຄຸນຂອງອາຫານ ແລະ ຂໍ້ຄວາມທາງດ້ານຄຸນນະພາບເກີນຄວາມເປັນຈິງໂດຍບໍ່ໄດ້ຮັບອະນຸຍາດຈາກກົມອາຫານ ແລະ ຢາ ຈະຖືກປັບໃໝ 3.000.000 ກີບຕໍ່ຄັ້ງ;
7. ນຳໃຊ້ວັດຖຸດິບ, ສານເຄມີ ແລະ ສ່ວນປະກອບອື່ນ ທີ່ບໍ່ແມ່ນຊະນິດທີ່ໃຊ້ສຳລັບອາຫານ ໃນຂະບວນການຜະລິດ ຈະຖືກປັບໃໝ 2.000.000 ກີບຕໍ່ຜະລິດຕະພັນ;
8. ຮັບພະນັກງານທີ່ເປັນພະຍາດຕິດແປດ, ເສບສິ່ງເສບຕິດ ແລະ ມຶນເມົາ ເຮັດວຽກໃນທຸລະກິດອາຫານຈະຖືກປັບໃໝ 500.000 ກີບຕໍ່ຄົນ;

**ມາດຕາ 41 ມາດຕະການທາງແພ່ງ ແລະ ອາຍາ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ລະເມີດຂໍ້ຕົກລົງສະບັບນີ້ໂດຍຕັ້ງໃຈ ຫຼື ບໍ່ຕັ້ງໃຈ ອັນ ໄດ້ກໍ່ຄວາມເສຍຫາຍໃຫ້ແກ່ ບຸກຄົນອື່ນ ຕ້ອງໄດ້ໃຊ້ແທນຄ່າເສຍຫາຍທີ່ຕົນໄດ້ກໍ່ຂຶ້ນ ແລະ ຈະຖືກລົງໂທດຕາມກົດໝາຍອາຍາ ຕາມກໍລະນີເບົາ ຫຼື ໜັກ.

## ໝວດທີ 9
## ບົດບັນຍັດສຸດທ້າຍ

**ມາດຕາ 42 ການຈັດຕັ້ງປະຕິບັດ**

ມອບໃຫ້ກົມອາຫານ ແລະ ຢາ ເປັນເຈົ້າການໃນການຜັນຂະຫຍາຍ ໂດຍປະສານສົມທົບກັບພະແນກສາທາລະນະສຸກແຂວງ, ນະຄອນຫຼວງ ແລະ ຂະແໜງການທີ່ກ່ຽວຂ້ອງ ເພື່ອຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ໃຫ້ປະກົດຜົນເປັນຈິງ.

**ມາດຕາ 43 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ແລະ ບັງຄັບໃຊ້ ພາຍຫຼັງລົງຈົດໝາຍເຫດທາງລັດຖະການ ສິບຫ້າວັນ ເປັນຕົ້ນໄປ.

ຂໍ້ຕົກລົງ ສະບັບນີ້ໃຊ້ປ່ຽນແທນ ຂໍ້ກຳນົດ ວ່າດ້ວຍການຈົດທະບຽນອາຫານ ສະບັບເລກທີ 1600/ກຊສ, ລົງວັນທີ 25 ພະຈິກ 1994.

**ລັດຖະມົນຕີ**

ປອ.ດຣ. ບຸນແຝງ ພູມມະໄລສິດ